**ພະແນກບໍລິການດ້ານການພັດທະນາ**
1215 O Street, MS 7-40
Sacramento, CA 95814
TTY: 711
(833) 421-0061

ວັນທີ: 27 ກໍລະກົດ 2022

ເຖິງ: ຜູ້ອໍານວຍການສູນປະຈໍາເຂດ

ເລື່ອງ: ໂຄງການກໍານົດການປົກຄອງດ້ວຍຕົນເອງ (SDP): ການຈ່າຍເງິນຄ່າການບໍລິການການຄຸ້ມຄອງການເງິນສໍາລັບຜູ້ເຂົ້າຮ່ວມ SDP ຂອງສູນປະຈໍາເຂດ

ຮ່າງກົດໝາຍວ່າດ້ວຍການບໍລິການດ້ານພັດທະນາການ SB 188 (ພາກທີ 49, ລັດຖະບັນຍັດປີ 2022) ໄດ້ປັບປຸງປະມວນກົດລະບຽບກ່ຽວກັບສະຫວັດດີການ ແລະ ສະຖາບັນ ຂໍ້ 4685.8(c)(1), ເຊິ່ງລຶບລ້າງຂໍ້ກໍານົດທີ່ໃຫ້ຜູ້ເຂົ້າຮ່ວມຈ່າຍຄ່າບໍລິການຄຸ້ມຄອງການເງິນ (FMS) ຈາກງົບປະມານສ່ວນຕົວຂອງຜູ້ເຂົ້າຮ່ວມເອງ. ການປ່ຽນແປງທາງກົດໝາຍນີ້, ໂດຍມີຜົນບັງຄັບໃຊ້ຕັ້ງແຕ່ວັນທີ 1 ກໍລະກົດ 2022, ຈະປ່ຽນແທນຄໍາສັ່ງ COVID-19 ເລກທີ 01-111920 ຂອງພະແນກ, ເຊິ່ງຍົກເວັ້ນຂໍ້ກໍານົດທີ່ໃຫ້ຜູ້ເຂົ້າຮ່ວມ SDP ຈ່າຍຄ່າໃຊ້ຈ່າຍຂອງຜູ້ໃຫ້ບໍລິການ FMS ຂອງເຂົາເຈົ້າໃນລະຫວ່າງສະຖານະການສຸກເສີນ. ໂດຍມີຜົນບັງຄັບໃຊ້ຕັ້ງແຕ່ວັນທີ 1 ກໍລະກົດ 2022, ຄ່າໃຊ້ຈ່າຍຂອງຜູ້ໃຫ້ບໍລິການ FMS ຈະຖືກຈ່າຍໃຫ້ໂດຍສູນປະຈໍາເຂດ ຈາກງົບປະມານສ່ວນຕົວຂອງຜູ້ເຂົ້າຮ່ວມ.

ໃນການຈັດຕັ້ງປະຕິບັດການປ່ຽນແປງນີ້, ສູນປະຈໍາເຂດຄວນເຮັດສິ່ງຕໍ່ໄປນີ້:

- ອະນຸຍາດຄ່າໃຊ້ຈ່າຍຂອງຜູ້ໃຫ້ບໍລິການ FMS ແຍກຕ່າງຫາກຈາກງົບປະມານ ແລະ ແຜນການໃຊ້ຈ່າຍສ່ວນບຸກຄົນ.
- ເຮັດວຽກກັບຜູ້ເຂົ້າຮ່ວມ SDP ເພື່ອຊອກຫາການປັບຕົວທີ່ຈໍາເປັນຕໍ່ແຜນການໃຊ້ຈ່າຍຂອງເຂົາເຈົ້າໃຫ້ທັນເວລາ ເພື່ອສະແດງບ່ອນທີ່ອາດຈະມີການໃຊ້ຄ່າທໍານຽມ FMS ທີ່ນໍາໄປໃຊ້ໃນຈຸດປະສົງອື່ນ.

ຜູ້ບໍລິໂພກ, ສະມາຊິກໃນຄອບຄົວ ຫຼື ຜູ້ໃຫ້ບໍລິການຕ້ອງຕິດຕໍ່ຫາສູນບໍລິການປະຈຳເຂດຂອງເຂົາເຈົ້າຫາກມີຄຳຖາມກ່ຽວກັບຄຳແນະນຳຂອງໂຄງການນີ້.

ດ້ວຍຄວາມເຄົາລົບ,

*ຕົ້ນສະບັບລົງນາມໂດຍ:*

MARICRIS ACON
ຮອງຜູ້ອຳນວຍການ
ຂະແໜງບໍລິຫານໂຄງການລັດຖະບານກາງ

ສຳເນົາເຖິງ: ຜູ້ບໍລິຫານສູນປະຈຳເຂດ
ຜູ້ອຳນວຍການຝ່າຍບໍລິການຜູ້ບໍລິໂພກຂອງສູນປະຈຳເຂດ
ຜູ້ອຳນວຍການຝ່າຍບໍລິການຊຸມຊົນຂອງສູນປະຈຳເຂດ
ສະມາຄົມໜ່ວຍງານຂອງສູນປະຈຳເຂດ
ສະພາແຫ່ງລັດວ່າດ້ວຍຄວາມພິການດ້ານພັດທະນາການ
Nancy Bargmann, DDS
Brian Winfield, DDS
Carla Castañeda, DDS
Jim Knight, DDS
Ernie Cruz, DDS
Aaron Christian, DDS
Tim Travis, DDS